ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

0553----

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ /ອຄ.ກຄພນ

ນະຄອນຫຼວງວຽງຈັນ, ວັນທີ 11 ມິຖຸນາ 2020

# ແຈ້ງການ

ເຖິງ : ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັສ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປໍ້າຂາຍຍ່ອຍນ້ຳມັນເຊື້ອໄຟ.

ເລື່ອງ : ແຈ້ງປັບຂຶ້ນລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍວ່າດ້ວຍ ສ່ວຍສາອາກອນ ເລກທີ 68/ສພຊ, ລົງວັນທີ 19 ມິຖຸນາ 2019.
- ອີງຕາມ ດຳລັດວ່າດ້ວຍ ການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010.
- ອີງຕາມ ດຳລັດວ່າດ້ວຍ ການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ ເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017.
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 1645/ຫສນຍ.ກລຂ, ລົງວັນທີ 02 ຕຸລາ 2018.

ກະຊວງອຸດສາຫະກຳ ແລະ ການຄ້າ, ຂໍແຈ້ງມາຍັງສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັສ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປໍ້າຂາຍຍ່ອຍນ້ຳມັນເຊື້ອໄຟ ໃຫ້ປະຕິບັດລາຄາຂາຍຍ່ອຍໃໝ່ ໃນເຂດເທດສະບານແຂວງ, ນະຄອນຫຼວງວຽງຈັນ ດັ່ງນີ້:

ຫົວໜ່ວຍ: ກີບ/ລິດ.

| ລ/ດ | ຈຸດ | ແອັດຊັງພິເສດ | ແອັດຊັງທຳມະດາ | ກາຊວນ |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | 8,080 | 7,590 | 7,130 |
| 2 | ແຂວງຜົ້ງສາລີ | - | 8,350 | 7,890 |
| 3 | ແຂວງຫຼວງນ້ຳທາ | - | 7,950 | 7,490 |
| 4 | ແຂວງອຸດົມໄຊ | 8,560 | 8,070 | 7,610 |
| 5 | ແຂວງບໍ່ແກ້ວ | 8,180 | 7,690 | 7,230 |
| 6 | ແຂວງຫຼວງພະບາງ | 8,480 | 7,990 | 7,530 |
| 7 | ແຂວງໄຊຍະບູລີ | 8,330 | 7,840 | 7,380 |
| 8 | ແຂວງຫົວພັນ | - | 7,990 | 7,530 |
| 9 | ແຂວງຊຽງຂວາງ | - | 7,780 | 7,320 |
| 10 | ແຂວງວຽງຈັນ | 8,080 | 7,590 | 7,130 |
| 11 | ແຂວງບໍລິຄຳໄຊ | 8,160 | 7,670 | 7,210 |
| 12 | ແຂວງຄຳມ່ວນ | 8,110 | 7,620 | 7,160 |
| 13 | ແຂວງສະຫວັນນະເຂດ | 8,110 | 7,620 | 7,160 |
| 14 | ແຂວງສາລະວັນ | 8,290 | 7,800 | 7,340 |
| 15 | ແຂວງຈຳປາສັກ | 8,140 | 7,650 | 7,190 |
| 16 | ແຂວງເຊກອງ | - | 7,830 | 7,370 |
| 17 | ແຂວງອັດຕະປື | 8,320 | 7,830 | 7,370 |
| 18 | ແຂວງໄຊສົມບູນ | - | 7,830 | 7,370 |

- ລາຄາໃໝ່ນີ້ ໃຫ້ເລີ່ມປະຕິບັດ ວັນທີ 12 ມິຖຸນາ 2020; ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ.
- ການປັບລາຄາຄັ້ງນີ້ ແມ່ນໄດ້ຫຼຸດຄັງແຮ ແອັດຊັງພິເສດ 250 ກີບ/ລິດ, ແອັດຊັງທຳມະດາ 200 ກີບ/ລິດ ແລະ ກາຊວນ 300 ກີບ/ລິດ.
- ປັບລາຄານ້ຳມັນເຊື້ອໄຟ ແອັດຊັງພິເສດ ປັບຂຶ້ນ 230 ກີບ/ລິດ, ແອັດຊັງທຳມະດາ ປັບຂຶ້ນ 230 ກີບ/ລິດ ແລະ ກາຊວນ ປັບຂຶ້ນ 200 ກີບ/ລິດ
- ການຄິດໄລ່ເສຍພັນທະ ແລະ ຄ່າທຳນຽມຕ່າງໆ ແມ່ນໃຫ້ພາກສ່ວນກ່ຽວຂ້ອງ ຄິດໄລ່ເກັບຕາມທີ່ໄດ້ກຳນົດໄວ້ ໃນໂຄງສ້າງລາຄານ້ຳມັນເຊື້ອໄຟ ສະບັບເລກທີ 0479/ກຄພນ.ຄສລ, ລົງວັນທີ 11 ມິຖຸນາ 2020 ຈົນກວ່າຈະມີການປ່ຽນແປງ.
- ໃຫ້ບັນດາບໍລິສັດນ້ຳມັນເຊື້ອໄຟ ປະຕິບັດຕາມເນື້ອໃນຂ້າງເທິງນີ້ຢ່າງເຂັ້ມງວດ ແລະ ຄຸ້ມຄອງປ້ຳຂາຍຍ່ອຍຂອງຕົນ ໃຫ້ບໍລິການຢ່າງເປັນປົກກະຕິ.
- ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ ສະບັບເລກທີ 0502/ອຄ.ກຄພນ, ລົງວັນທີ 27 ພຶດສະພາ 2020.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ຮ. ທ. ລັດຖະມົນຕີ

ສົມຈິດ ອິນທະມິດ

<u>ບ່ອນສົ່ງ</u>

- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ).
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ໃຊ້ຕາງລາຍງານ).
- ຫ້ອງການ ກະຊວງການເງິນ (ເພື່ອຊາບ).
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ).
- ກົມພາສີ ແລະ ກົມສ່ວຍສາອາກອນ ກະຊວງການເງິນ (ເພື່ອຊາບ ແລະ ໃຫ້ຄວາມຮ່ວມມື).
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ).
- ຄະນະກຳມະການຄຸ້ມຄອງຕະຫຼາດຫຼັກຊັບ (ເພື່ອຊາບ).
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ທົ່ວປະເທດ (ເພື່ອຊາບ ແລະ ຕິດຕາມ).

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

0479

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າພາຍໃນ

ເລກທີ: /ກຄພນ.ຄສລ

ນະຄອນຫຼວງວຽງຈັນ, ວັນທີ: 11 ມິຖຸນາ 2020.

# ໂຄງສ້າງລາຄານ້ຳມັນເຊື້ອໄຟ

ຫົວໜ່ວຍ: ກີບ/ລິດ.

| ຫ້ອງ | | 1 | 2 | 3 | 4 | 5 | 6 | 7 | 8 | 9 | 10 | 11 | 12 | 13 | 14 | 15 | 16 | 17 | 18 | 19 | 20 | 21 | 22 | 23 | 24 |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| ແຂວງ | ຊະນິດ | ລາຄາ CIF ຄິດໄລ່ພາສີ | | ພາສີ | ອກຊ | ກທ | ຄວາມ | ສົ້ນ | ມົດຕີ | ກວດສອບ | ຖັງແຮ | ລວມ | ອມພ | ກຳໄລ | ລາຄາຂາຍຍົກ | | | | | | ບໍລິການ | ຂາຍຍ່ອຍ | | | ເພີ່ມ/ |
| | | ໂດລາສະຫະລັດ | ກີບ | ຂາເຂົ້າ | ຂາເຂົ້າ | ທາງ | ສ່ຽງ | ເປືອງ | | ຄຸນນະພາບ | | ຕົ້ນທຶນ | ຕົ້ນທາງ | ຂາຍຍົກ | ປະຈຸບັນ | ນອກ ອມພ | ອມພ 10% | ຄິດໄລ່ | ລວມ ອມພ | ອມພ ມອບຕົ້ນ | ປ້ຳ | ປະຈຸບັນ | ຄິດໄລ່ | ສະເໜີ | ຫຼຸດ |
| ນ.ວ | ອ/ຊ ພິເສດ | $ 0.3132 | 2,822 | 564 | 1,185 | 520 | 28 | 148 | 6 | 16 | 1,675 | 6,964 | 457 | 140 | **7,576** | 7,104 | 710 | 7,814 | **7,814** | 253 | 270 | **7,850** | 8,084 | **8,080** | 230 |
| | ອ/ຊ ທຳມະດາ | $ 0.2890 | 2,604 | 391 | 898 | 520 | 28 | 148 | 6 | 16 | 1,900 | 6,510 | 389 | 140 | **7,087** | 6,650 | 665 | 7,315 | **7,315** | 276 | 270 | **7,360** | 7,585 | **7,590** | 230 |
| | ກາຊວນ | $ 0.3222 | 2,903 | 145 | 610 | 520 | 28 | 148 | 6 | 16 | 1,725 | 6,100 | 366 | 140 | **6,663** | 6,240 | 624 | 6,864 | **6,864** | 258 | 270 | **6,930** | 7,134 | **7,130** | 200 |
| ຄຳມ່ວນ | ອ/ຊ ພິເສດ | $ 0.3151 | 2,839 | 568 | 1,192 | 520 | 28 | 148 | 6 | 16 | 1,675 | 6,992 | 460 | 140 | **7,606** | 7,132 | 713 | 7,845 | **7,845** | 253 | 270 | **7,880** | 8,115 | **8,110** | 230 |
| | ອ/ຊ ທຳມະດາ | $ 0.2911 | 2,623 | 393 | 905 | 520 | 28 | 148 | 6 | 16 | 1,900 | 6,539 | 392 | 140 | **7,118** | 6,679 | 668 | 7,347 | **7,347** | 276 | 270 | **7,390** | 7,617 | **7,620** | 230 |
| | ກາຊວນ | $ 0.3246 | 2,924 | 146 | 614 | 520 | 28 | 148 | 6 | 16 | 1,725 | 6,128 | 368 | 140 | **6,693** | 6,268 | 627 | 6,894 | **6,894** | 258 | 270 | **6,960** | 7,164 | **7,160** | 200 |
| ສະຫວັນ | ອ/ຊ ພິເສດ | $ 0.3151 | 2,839 | 568 | 1,192 | 520 | 28 | 148 | 6 | 16 | 1,675 | 6,992 | 460 | 140 | **7,606** | 7,132 | 713 | 7,845 | **7,845** | 253 | 270 | **7,880** | 8,115 | **8,110** | 230 |
| | ອ/ຊ ທຳມະດາ | $ 0.2911 | 2,623 | 393 | 905 | 520 | 28 | 148 | 6 | 16 | 1,900 | 6,539 | 392 | 140 | **7,118** | 6,679 | 668 | 7,347 | **7,347** | 276 | 270 | **7,390** | 7,617 | **7,620** | 230 |
| | ກາຊວນ | $ 0.3246 | 2,924 | 146 | 614 | 520 | 28 | 148 | 6 | 16 | 1,725 | 6,128 | 368 | 140 | **6,693** | 6,268 | 627 | 6,894 | **6,894** | 258 | 270 | **6,960** | 7,164 | **7,160** | 200 |
| ຈຳປາສັກ | ອ/ຊ ພິເສດ | $ 0.3169 | 2,855 | 571 | 1,199 | 520 | 28 | 148 | 6 | 16 | 1,675 | 7,018 | 463 | 140 | **7,635** | 7,158 | 716 | 7,874 | **7,874** | 253 | 270 | **7,910** | 8,144 | **8,140** | 230 |
| | ອ/ຊ ທຳມະດາ | $ 0.2931 | 2,641 | 396 | 911 | 520 | 28 | 148 | 6 | 16 | 1,900 | 6,566 | 395 | 140 | **7,147** | 6,706 | 671 | 7,376 | **7,376** | 276 | 270 | **7,420** | 7,646 | **7,650** | 230 |
| | ກາຊວນ | $ 0.3270 | 2,946 | 147 | 619 | 520 | 28 | 148 | 6 | 16 | 1,725 | 6,155 | 371 | 140 | **6,723** | 6,295 | 629 | 6,924 | **6,924** | 258 | 270 | **6,990** | 7,194 | **7,190** | 200 |
| ບໍ່ແກ້ວ | ອ/ຊ ພິເສດ | $ 0.3194 | 2,877 | 575 | 1,209 | 520 | 28 | 148 | 6 | 16 | 1,675 | 7,055 | 466 | 140 | **7,675** | 7,195 | 719 | 7,914 | **7,914** | 253 | 270 | **7,950** | 8,184 | **8,180** | 230 |
| | ອ/ຊ ທຳມະດາ | $ 0.2959 | 2,666 | 400 | 920 | 520 | 28 | 148 | 6 | 16 | 1,900 | 6,603 | 399 | 140 | **7,189** | 6,743 | 674 | 7,418 | **7,418** | 276 | 270 | **7,460** | 7,688 | **7,690** | 230 |
| | ກາຊວນ | $ 0.3302 | 2,975 | 149 | 625 | 520 | 28 | 148 | 6 | 16 | 1,725 | 6,191 | 375 | 140 | **6,762** | 6,331 | 633 | 6,964 | **6,964** | 258 | 270 | **7,030** | 7,234 | **7,230** | 200 |
| ຊຽງຂວາງ | ອ/ຊ ທຳມະດາ | $ 0.3020 | 2,721 | 408 | 939 | 520 | 28 | 148 | 6 | 16 | 1,900 | 6,685 | 407 | 140 | **7,279** | 6,825 | 683 | 7,508 | **7,508** | 276 | 270 | **7,550** | 7,778 | **7,780** | 230 |
| | ກາຊວນ | $ 0.3374 | 3,040 | 152 | 638 | 520 | 28 | 148 | 6 | 16 | 1,725 | 6,273 | 383 | 140 | **6,852** | 6,413 | 641 | 7,054 | **7,054** | 258 | 270 | **7,120** | 7,324 | **7,320** | 200 |
| ໄຊຍະບູລີ | ອ/ຊ ພິເສດ | $ 0.3194 | 2,877 | 575 | 1,209 | 520 | 28 | 148 | 6 | 16 | 1,675 | 7,055 | 466 | 140 | **7,675** | 7,195 | 719 | 7,914 | **7,914** | 253 | 270 | **7,950** | 8,184 | **8,180** | 230 |
| | ອ/ຊ ທຳມະດາ | $ 0.2959 | 2,666 | 400 | 920 | 520 | 28 | 148 | 6 | 16 | 1,900 | 6,603 | 399 | 140 | **7,189** | 6,743 | 674 | 7,418 | **7,418** | 276 | 270 | **7,460** | 7,688 | **7,690** | 230 |
| | ກາຊວນ | $ 0.3302 | 2,975 | 149 | 625 | 520 | 28 | 148 | 6 | 16 | 1,725 | 6,191 | 375 | 140 | **6,762** | 6,331 | 633 | 6,964 | **6,964** | 258 | 270 | **7,030** | 7,234 | **7,230** | 200 |

<u>ໝາຍເຫດ</u> : ອັດຕາແລກປ່ຽນ ທ/ຄ ມື້ຄິດໄລ່ໂຄງສ້າງ ຄັ້ງວັນທີ 10/06/2020 = 9,009 ກີບ/ໂດລາສະຫະລັດ.

| | ອ/ຊ ພິເສດ | ອ/ຊ ທຳມະດາ | ກາຊວນ |
|---|---|---|---|
| ພາສີ | 20% | 15% | 5% |
| ອກຊ | 35% | 30% | 20% |
| ອມພ | 10% | 10% | 10% |

ຫົວໜ້າກົມ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າພາຍໃນ

ອາລະໄຊ ເລັ່ງສະຫວັດ